# ມິຊຊາອາທິດທີ 24 ກຳນົດທຳມະດາປີ C

# ວັນທີ 15 ກັນຍາ 2019



**ພຣະວໍລະສານໂດຍນັກບຸນລູກາ 15, 1-32**

ໃນເວລານັ້ນ, ຄົນເກັບສ່ວຍແລະຄົນບາບພາກັນຫຍັບເຂົ້າມາໃກ້ພຣະເຢຊູເຈົ້າເພື່ອຟັງພຣະອົງ. ພວກຟາຣີເຊວແລະພວກອາຈານພຣະຄຳພີພາກັນຈົ່ມວ່າ: ຄົນຜູ້ນີ້ຕ້ອນຮັບພວກຄົນບາບແລະຮັບປະທານຮ່ວມກັບເຂົາ.

ພຣະອົງຈຶ່ງກ່າວຄວາມປຽບທຽບໃຫ້ພວກນັ້ນຟັງວ່າ: ໃຜໃນພວກເຈົ້າທີ່ມີແກະຢູ່ຮ້ອຍໂຕແລ້ວເສຍໄປໂຕໜຶ່ງຈະບໍ່ປະແກະເກົ້າສິບເກົ້າໂຕທີ່ເຫລືອໄວ້ໃນທີ່ປ່ຽວເພື່ອຈະໄດ້ໄປຊອກຫາໂຕທີ່ເສຍໄປນັ້ນຈົນກວ່າຈະພົບເຫັນບໍ? ເມື່ອພົບເຫັນແລ້ວລາວກໍຈະໃສ່ບ່າແບກມາດ້ວຍຄວາມຍິນດີ ແລະເມື່ອມາຮອດເຮືອນແລ້ວລາວຈະເອີ້ນພວກມິດສະຫາຍແລະພວກໃກ້ຄຽງມາຮວມກັນເວົ້າວ່າ: ພວກເຈົ້າຈົ່ງຮ່ວມຍິນດີກັບຂ້ອຍຍ້ອນຂ້ອຍໄດ້ພົບເຫັນແກະໂຕທີ່ເສຍໄປນັ້ນແລ້ວ. ດັ່ງນີ້ແລ້ວ, ເຮົາຈຶ່ງບອກພວກເຈົ້າວ່າ: ຢູ່ສະຫວັນຈະມີຄວາມຍິນດີຍ້ອນຄົນບາບແຕ່ຜູ້ດຽວເປັນທຸກກັບໃຈ.

ຫລືວ່າຍິງຜູ້ໜຶ່ງມີເງິນຢູ່ສິບຫລຽນແລ້ວມາເສຍໄປຫລຽນໜຶ່ງ ລາວຈະບໍ່ໄຕ້ໂຄມປັດກວາດເຮືອນຊານແລະຊອກຫາຢ່າງເອົາໃຈໃສ່ຈົນກວ່າຈະພົບເຫັນບໍ? ແລະເມື່ອພົບເຫັນແລ້ວລາວກໍຈະເອີ້ນພວກມິດສະຫາຍແລະພວກໃກ້ຄຽງມາຮວມກັນເວົ້າວ່າ: ພວກເຈົ້າຈົ່ງມາຮ່ວມຍິນດີກັບຂ້ອຍ ຍ້ອນວ່າຂ້ອຍໄດ້ພົບເຫັນເງິນທີ່ເສຍໄປນັ້ນແລ້ວ. ດັ່ງນີ້ແລ້ວ, ເຮົາຈຶ່ງບອກພວກເຈົ້າວ່າ: ພວກເທວະດາຂອງພຣະເປັນເຈົ້າມີຄວາມຍິນດີ ຍ້ອນຄົນບາບແຕ່ຜູ້ດຽວເປັນທຸກກັບໃຈ.

ພຣະອົງຍັງກ່າວຄວາມປຽບທຽບໃຫ້ພວກນັ້ນຟັງອີກວ່າ: ບຸລຸດຜູ້ໜຶ່ງມີລູກຊາຍສອງຄົນ. ຜູ້ເປັນນ້ອງເວົ້າກັບພໍ່ວ່າ: ພໍ່ເອີຍ, ຂໍພໍ່ແບ່ງຊັບສົມບັດອັນເປັນສ່ວນຂອງລູກໃຫ້ລູກເສຍ ແລ້ວພໍ່ກໍເລີຍແບ່ງປັນໃຫ້. ບໍ່ທໍ່ໃດມື້ຕໍ່ມາ, ລູກຊາຍຜູ້ນ້ອງກໍທ້ອນໂຮມເອົາຊັບສິນຂອງຕົນທັງໝົດແລ້ວອອກເດີນທາງໄປສູ່ປະເທດອື່ນໄກ ແລະຢູ່ທີ່ນັ້ນເຂົາໄດ້ປະພຶດຕົວເປັນຄົນຊົ່ວ, ໄດ້ສະຊາຍຜານຊັບສິນຂອງຕົນຈົນໝົດກ້ຽງ. ເມື່ອເຂົາຜານຊັບໝົດແລ້ວບັງເອີນໃນປະເທດນັ້ນມີການອຶດຢາກຢ່າງໃຫຍ່ ແລະລູກຊາຍຄົນນັ້ນກໍເລີ່ມຮູ້ສຶກອຶດຢາກນຳເຂົາ ຈຶ່ງໄປຂໍຮັບຈ້າງຊາວບ້ານຜູ້ໜຶ່ງໃນບໍລິເວນນັ້ນ. ນາຍຜູ້ນັ້ນຈຶ່ງໄດ້ໃຊ້ເຂົາໄປເກືອໝູໃນທົ່ງນາຂອງຕົນ, ເຂົາຍັງຢາກກິນອາຫານຂອງໝູຊໍ້າ ແຕ່ບໍ່ມີໃຜໃຫ້ເຂົາກິນ. ເຂົາຈຶ່ງຫວນຄິດເວົ້າກັບຕົວເອງວ່າ: ລູກຈ້າງຂອງພໍ່ຂ້ອຍທໍ່ໃດຄົນກໍຍັງມີຂະໜົມປັງເຫລືອກິນ ສ່ວນຂ້ອຍຢູ່ທີ່ນີ້ຫິວເກືອບຈະຕາຍຢູ່ແລ້ວ! ຂ້ອຍຈະລຸກຂຶ້ນເມືອຫາພໍ່ແລະເວົ້ານຳເພິ່ນວ່າ: ພໍ່ເອີຍ! ລູກໄດ້ເຮັດບາບຜິດຕໍ່ສະຫວັນແລະຕໍ່ພໍ່ແລ້ວ ລູກບໍ່ສົມມີຊື່ວ່າເປັນລູກຂອງພໍ່ອີກໃຫ້ພໍ່ຖືເອົາລູກຄືກັນກັບລູກຈ້າງຜູ້ໜຶ່ງເຖີດ. ເຂົາລຸກຂຶ້ນກັບເມືອເຮືອນຫາພໍ່ຂອງຕົນ. ເວລາຍັງຢູ່ແຕ່ໄກ ພໍ່ຂອງເຂົາຫລຽວເຫັນແລະຮູ້ສຶກສົງສານຫລາຍຈຶ່ງແລ່ນໄປກອດເອົາ. ລູກຈຶ່ງເວົ້າກັບພໍ່ວ່າ: ພໍ່ເອີຍ! ລູກໄດ້ທຳບາບຜິດຕໍ່ສະຫວັນແລະຕໍ່ພໍ່, ລູກບໍ່ສົມໄດ້ຊື່ວ່າເປັນລູກຂອງພໍ່ອີກ. ສ່ວນພໍ່ເວົ້າກັບຄົນໃຊ້ວ່າ: ໄວໆ ຮີບໄປເອົາເສື້ອຜືນງາມທີ່ສຸດມາໃຫ້ລູກເຮົານຸ່ງ, ເອົາແຫວນມາໃສ່ນິ້ວມືໃຫ້ແລະເອົາເກີບມາສຸບໃຫ້ດ້ວຍ ແລ້ວໄປຈູງເອົາງົວໂຕອ້ວນພີມາຂ້າ ພວກເຮົາຈະກິນລ້ຽງກັນຢ່າງມ່ວນຊື່ນ. ຍ້ອນວ່າລູກຂອງຂ້ອຍທີ່ຕາຍໄປແລ້ວໄດ້ກັບມີຊີວິດໃໝ່. ເຂົາໄດ້ຫາຍຕົວໄປແລະໄດ້ຄືນມາພົບພໍ້ກັນອີກ. ແລ້ວງານສະຫລອງກໍເລີ່ມຂຶ້ນ.

ເວລານັ້ນລູກກົກຍັງຢູ່ນາ, ເມື່ອກັບມາໃກ້ຈະຮອດເຮືອນກໍໄດ້ຍິນສຽງດົນຕີແລະສຽງເຕັ້ນລຳ. ເຂົາໄດ້ຮຽກຄົນໃຊ້ຜູ້ໜຶ່ງມາຖາມເຖິງເຫດການນັ້ນ. ຄົນໃຊ້ບອກວ່າ: ແມ່ນນ້ອງຊາຍທ່ານໄດ້ກັບຄືນມາແລ້ວ ແລະພໍ່ຂອງທ່ານໄດ້ຂ້າລູກງົວໂຕອ້ວນພີຍ້ອນເຫັນເຂົາຄືນມາຍັງສຸກສະບາຍດີ. ສ່ວນຜູ້ເປັນອ້າຍຮູ້ສຶກຢາກຮ້າຍບໍ່ຍອມເຂົ້າເຮືອນ, ພໍ່ຈຶ່ງອອກໄປໜ່ຽວວອນ. ແຕ່ເຂົາໄດ້ຕອບພໍ່ວ່າ: ລູກໄດ້ຮັບໃຊ້ພໍ່ມາຫລາຍປີແລ້ວ, ບໍ່ໄດ້ຂັດຂືນຄຳສັ່ງຂອງພໍ່ຈັກເທື່ອ ແລະພໍ່ກໍບໍ່ເຄີຍເອົາລູກແບ້ໃຫ້ລູກໄປກິນລ້ຽງກັບໝູ່ຈັກເທື່ອເລີຍ. ແຕ່ບັດນີ້, ລູກຂອງພໍ່ຜູ້ນີ້ທີ່ໄດ້ຜານຊັບສິນຂອງພໍ່ໝົດກ້ຽງກັບແມ່ຈ້າງນາງເລງ, ມັນກັບຕ່າວມາພໍ່ກໍຍັງໄດ້ຂ້າງົວໂຕອ້ວນພີຕ້ອນຮັບມັນອີກ. ພໍ່ຈຶ່ງກ່າວຕອບວ່າ: ລູກເອີຍ! ລູກຢູ່ນຳພໍ່ສະເໝີມາ ແລະທຸກສິ່ງທີ່ເປັນຂອງພໍ່ກໍເປັນຂອງລູກ, ຈຳເປັນແລ້ວທີ່ຈະຈັດງານລ້ຽງມ່ວນຊື່ນ. ຍ້ອນວ່ານ້ອງຊາຍຂອງລູກຕາຍໄປແລ້ວ ໄດ້ມີຊີວິດໃໝ່. ເຂົາໄດ້ຫາຍຕົວໄປ ແລະໄດ້ກັບມາພົບພໍ້ກັນອີກ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ລກ 15, 1-32**

ເລື່ອງປຽບທຽບສາມເລື່ອງທີ່ພຣະເຢຊູເຈົ້າເລົ່າໃຫ້ພວກຟາຣີເຊວແລະພວກອາຈານພຣະຄຳພີຟັງວັນນີ້ ຖ້າພວກເຮົາສັງເກດດີໆກໍຈະເຫັນວ່າທັງສາມເລື່ອງ ເຖິງວ່າຈະມີເນື້ອຫາທີ່ແຕກຕ່າງກັນ ແຕ່ທັງສາມລ້ວນແຕ່ມີຄວາມໝາຍອັນດຽວກັນນັ້ນຄືຄວາມຍິນດີແຫ່ງການພົບພໍ້.

ຄວາມປຽບທຽບເລື່ອງຜູ້ລ້ຽງແກະຮ້ອຍໂຕທີ່ເສຍໄປໂຕໜຶ່ງກັບເລື່ອງຜູ້ຍິງທີ່ມີສິບຫລຽນທີ່ເສຍໄປຫລຽນໜຶ່ງນັ້ນມີຈຸດຄ້າຍຄືກັນຢູ່ບ່ອນວ່າຜູ້ເປັນເຈົ້າຂອງໃນສອງເລື່ອງນີ້ລ້ວນແຕ່ມີຄວາມເສຍດາຍກັບສິ່ງທີ່ຕົກເຮ່ຍເສຍຫາຍໄປແລະພວກເຂົາບໍ່ລໍຊ້າທີ່ຈະອອກໄປຊອກຫາເພື່ອຫວັງຈະພົບພໍ້ສິ່ງນັ້ນຄືນມາ. ເມື່ອພົບເຫັນແລ້ວສິ່ງທີ່ພວກເຂົາໄດ້ຮັບບໍ່ພຽງແຕ່ສິ່ງທີ່ໄດ້ສູນເສຍໄປເທົ່ານັ້ນແຕ່ແມ່ນຄວາມຍິນດີ. ເປັນຫຍັງຜູ້ເປັນເຈົ້າຂອງຈຶ່ງມີຄວາມຍິນດີຫລາຍປານນີ້ເມື່ອເຂົາພົບພໍ້ສິ່ງທີ່ເສຍຫາຍໄປ? ຍ້ອນສິ່ງທີ່ຕົກເຮ່ຍເສຍຫາຍໄປນີ້ມີຄຸນຄ່າຫລາຍກວ່າສິ່ງທີ່ເຂົາມີບໍ? ຫລືຜູ້ເປັນເຈົ້າຂອງບໍ່ຢາກໃຫ້ສິ່ງທີ່ເຂົາເປັນກຳມະສິດນັ້ນຕ້ອງສູນເສຍໄປແມ່ນແຕ່ຢ່າງດຽວ?

ພວກເຮົາຈະພ້ອມກັນຊອກຫາຄຳຕອບຂອງຄຳຖາມເຫລົ່ານີ້ໃນເລື່ອງປຽບທຽບກ່ຽວກັບລູກລ້າງຜານ. ຄວາມແຕກຕ່າງຂອງເລື່ອງປຽບທຽບລູກລ້າງຜານນີ້ກັບສອງເລື່ອງປຽບທຽບຂ້າງເທິງນັ້ນຄື ຜູ້ເປັນພໍ່ບໍ່ໄດ້ອອກໄປຊອກຫາລູກຜູ້ຈາກໄປພ້ອມກັບຊັບສິນຢູ່ເມືອງໄກ. ແຕ່ຜູ້ເປັນລູກຫລັງຈາກໄດ້ໃຊ້ຊີວິດໃນທາງບໍ່ຖືກຕ້ອງແລະຕົກຢູ່ໃນຄວາມອັດຕະຂັດຈຶ່ງໄດ້ຕັດສິນໃຈກັບຄືນເມືອຫາພໍ່ຂອງຕົນເພື່ອຂໍໂທດນຳເພິ່ນ. ເຖິງວ່າຜູ້ເປັນພໍ່ບໍ່ໄດ້ອອກໄປຊອກຫາລູກຂອງຕົນເໝືອນກັບຜູ້ເປັນເຈົ້າຂອງໃນເລື່ອງຄວາມປຽບທຽບຂ້າງເທິງ ແຕ່ຜູ້ເປັນພໍ່ກໍບໍ່ຢຸດຢ່ອນທີ່ຈະລໍຖ້າລູກຂອງຕົນກັບມາ. ແລະເມື່ອເຫັນລູກກັບມາແຕ່ໄກແລ້ວແທນທີ່ເຂົາຈະມີຄວາມໂກດເຄືອງແລະຄິດຢາກລົງໂທດລູກຜູ້ນີ້ ເຂົາພັດມີຄວາມສົງສານແລະລືມໄປໝົດສິ່ງບໍ່ດີທີ່ລູກເຂົາໄດ້ກະທຳ. ແທນທີ່ລູກຜູ້ນີ້ຈະຖືກລົງໂທດແລະຖືກຂັບໄລ່ ເຂົາພັດໄດ້ຮັບຄວາມຮັກແລະການຕ້ອນຮັບຢ່າງດີຈາກພໍ່ຂອງເຂົາຈົນວ່າຜູ້ເປັນອ້າຍມີຄວາມນ້ອຍໃຈ. ເປັນຫຍັງຜູ້ເປັນພໍ່ຈຶ່ງກະທຳແບບນີ້ກັບລູກລ້າງຜານ? ຍ້ອນເຂົາຮັກລູກຜູ້ນີ້ຫລາຍກວ່າລູກຊາຍກົກຂອງເຂົາບໍ? ໜຶ່ງໃນຄຳຕອບກໍຄືຜູ້ເປັນພໍ່ບໍ່ຢາກໃຫ້ລູກຂອງເຂົາຕ້ອງສູນເສຍໄປ. ດັ່ງນັ້ນເຂົາຈຶ່ງມີຄວາມຍິນດີເມື່ອເຫັນລູກເຂົາກັບມາ. ຄວາມຍິນດີນີ້ສະແດງອອກຜ່ານທາງງານລ້ຽງຢ່າງມ່ວນຊື່ນ. ແລະຄວາມຍິນດີນີ້ຍັງສະແດງອອກຜ່ານທາງຄຳເວົ້າຂອງຜູ້ເປັນພໍ່ກັບລູກຊາຍກົກອີກວ່າ: “ຍ້ອນວ່ານ້ອງຊາຍຂອງລູກຕາຍໄປແລ້ວ ໄດ້ມີຊີວິດໃໝ່. ເຂົາໄດ້ຫາຍຕົວໄປ ແລະໄດ້ກັບມາພົບພໍ້ກັນອີກ”.

ຖ້າຜູ້ເປັນພໍ່ໃນເລື່ອງປຽບທຽບນີ້ແມ່ນພຣະບິດາເຈົ້າສະຫວັນ ແລະລູກລ້າງຜານໃນເລື່ອງນີ້ແມ່ນພວກເຮົາແຕ່ລະຄົນເມື່ອຕົກຢູ່ໃນບາບແລະຕັດແຍກຈາກພຣະອົງແລ້ວ ແນ່ນອນພຣະບິດາເຈົ້າສະຫວັນຈະມີຄວາມຍິນດີແລະເມດຕາສົງສານພວກເຮົາຜູ້ເປັນຄົນບາບທຸກຄັ້ງ ເມື່ອພວກເຮົາກັບຄືນມາຫາພຣະອົງຢ່າງຈິງໃຈ. ອາແມນ

ຄຸນພໍ່ ອົງຕວນ ກຽດຕິສັກ